**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການຄ້າຕ່າງປະເທດ

ເລກທີ 0247 /ກຄຕ
ນະຄອນຫຼວງວຽງຈັນ, ວັນທີ 15 DEC 2023

# ແຈ້ງການ

**ເຖິງ:** - ທ່ານ ປະທານສະມາຄົມຍານພາຫະນະ, ນ້ຳມັນເຊື້ອໄຟ ແລະ ອາຍແກັດ.
- ບັນດາບໍລິສັດ ນຳເຂົ້າ ແລະ ສົ່ງອອກ ຍານພາຫະນະ, ນ້ຳມັນເຊື້ອໄຟ ແລະ ອາຍແກັດ.

**ເລື່ອງ:** ແຈ້ງການນຳໃຊ້ລະບົບ ແຈ້ງພາສີແບບເອເລັກໂຕຣນິກ (NSWA+) ເຂົ້າໃນການຂໍອະນຸຍາດນຳເຂົ້າພາຫະນະ, ນ້ຳມັນ ແລະ ອາຍແກັດ ຜ່ານບັນດາດ່ານພາສີສາກົນ ຢູ່ ແຂວງບໍ່ແກ້ວ, ແຂວງຜົ້ງສາລີ, ແຂວງສາລະວັນ, ແຂວງອັດຕະປື, ແຂວງເຊກອງ ແລະ ແຂວງຊຽງຂວາງ.

- ອີງຕາມ ແຈ້ງການຂອງ ກົມພາສີ,ກະຊວງການເງິນ ເລກທີ 12406/ກພສ. ວັນທີ 06 ທັນວາ 2023, ເລກທີ 12124/ກພສ. ລົງວັນທີ 28 ພະຈິກ 2023, ເລກທີ 11090/ກພສ. ລົງວັນທີ 01 ພະຈິກ 2023, ເລກທີ 10848/ກພສ. ລົງວັນທີ 25 ຕຸລາ 2023, ເລກທີ 11091/ກພສ. ລົງວັນທີ 01 ພະຈິກ 2023, ເລກທີ 11956/ກພສ. ລົງວັນທີ 22 ພະຈິກ 2023.

ກົມການຄ້າຕ່າງປະເທດ, ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງ ທ່ານ ຊາບວ່າ ໂດຍປະຕິບັດຕາມແຈ້ງການຂອງ ກົມພາສີ ກະຊວງການເງິນ ກ່ຽວກັບການນຳໃຊ້ລະບົບແຈ້ງພາສີ ເລີ່ມແຕ່ວັນທີ 18 ທັນວາ 2023, ກົມການຄ້າຕ່າງປະເທດ ຈະໄດ້ຢຸດການອອກໃບອະນຸຍາດນຳເຂົ້າແບບເຈ້ຍສໍ ຊຶ່ງຈະໄດ້ປ່ຽນແທນດ້ວຍການອອກອະນຸຍາດຜ່ານລະບົບແຈ້ງພາສີແບບເອເລັກໂຕຣນິກ (NSWA+) ສຳລັບການນຳເຂົ້າສິນຄ້າປະເພດພາຫະນະ, ນ້ຳມັນເຊື້ອໄຟ ແລະ ອາຍແກັດ ທີ່ຈະນຳເຂົ້າຜ່ານດ່ານພາສີສາກົນ ດັ່ງມີລາຍລະອຽດຕໍ່ໄປນີ້:

1. ແຂວງບໍ່ແກ້ວ: ດ່ານພາສີສາກົນຂົວມິດຕະພາບ IV, ດ່ານພາສີສາກົນບ້ານປາງມອນ ແລະ ດ່ານພາສີສາກົນສາມຫຼ່ຽມຄຳ;
2. ແຂວງຜົ້ງສາລີ: ດ່ານພາສີສາກົນປາງຫົກ ແລະ ດ່ານພາສີສາກົນລານຕຸ້ຍ;
3. ແຂວງສາລະວັນ: ດ່ານພາສີສາກົນລະໄລ;
4. ແຂວງອັດຕະປື: ດ່ານພາສີສາກົນພູເກືອ;
5. ແຂວງເຊກອງ: ດ່ານພາສີສາກົນດາກຕາອອກ;
6. ແຂວງຊຽງຂວາງ: ດ່ານພາສີສາກົນນ້ຳກັນ.

ສຳຫຼັບການນຳເຂົ້າຜ່ານດ່ານພາສີສາກົນອື່ນ ທີ່ຍັງບໍ່ສາມາດນຳໃຊ້ລະບົບແຈ້ງພາສີແບບເອເລັກໂຕຣນິກ (NSWA+) ແມ່ນຍັງສາມາດສືບຕໍ່ນຳໃຊ້ລະບົບເຈ້ຍສໍແບບເກົ່າຈົນກວ່າຈະມີແຈ້ງການເພີ່ມເຕີມ.

ດັ່ງນັ້ນ,ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມນີ້ດ້ວຍ.

**ຫົວໜ້າກົມ**

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການຄ້າຕ່າງປະເທດ

ນ. ມະນີວອນ ວົງໄຊ